# ຂໍ້ສອບເສັງອອກຊັ້ນມັທຍົມຣັຖຄາລີຟເນັຍ (CAHSEE)

ກົດໝາຍຂອງຣັຖ ໄດ້ຮຽກຮ້ອງໃຫ້ນັກຮຽນທຸກໆຄົນຢູ່ໃນໂຮງຮຽນຫລວງຣັຖຄາລີຟເນັຍສອບຜ່ານຂໍ້ສອບເສັງອອກຊັ້ນມັທຍົມຣັຖຄາລີຟເນັຍ (CAHSEE) ຈື່ງຈະໄດ້ຮັບໃບປະກາສນີຍະບັດ (Diploma). ດັ້ງເດີມນັ້ນ, ຂໍ້ຮຽກຮ້ອງນີ້ ໄດ້ເລີ້ມສໍາຫລັບການຈົບໃນສົກປີ 2004. ຢ່າງໃດກໍດີ, ໃນເດືອນກໍຣະກະດາ 2003 ສະພາສຶກສາຂອງຣັຖ ໄດ້ເຍື້ອນຂໍ້ຮຽກຮ້ອງນີ້ ໃສ່ການຈົບ ໃນສົກປີ 2006. ກົດໝາຍຂອງຣັຖໄດ້ຜ່ານອອກມາໃຊ້ໃນສົກປີ 1999 (ກົດໝາຍການສຶກສາພາກ 60850 ແລະ 60851) ໄດ້ອະນຸຍາດໃຫ້ຈັດທໍາ ແລະ ນໍາໃຊ້ CAHSEE ນີ້. ຈຸດປະສົງຂອງຂໍ້ສອບ CAHSEE ນີ້ແມ່ນເພື່ອປັບປຸງຄວາມສໍາເຣັດຂອງນັກຮຽນໃນຊັ້ນມັທຍົມໃຫ້ດີຂຶ້ນ ແລະ ເພື່ອຮັບປະກັນໃຫ້ພວກນັກຮຽນທີ່ຈົບຈາກຊັ້ນມັທຍົມໄປນັ້ນໃຫ້ມີຄວາມສາມາດຂັ້ນມາຕຖານຂອງຣັຖໃນດ້ານອັກສອນສາດ ພາສາອັງກິດ ແລະ ຄະນິດສາດ, ຊຶ່ງນໍາມາໃຊ້ໂດຍສະພາການສຶກສາຂອງຣັຖ.

ພວກນັກຮຽນທີ່ສອບເສັງ CAHSEE ບໍ່ຜ່ານໃນປີທີ ສິບນັ້ນ ຍັງມີໂອກາດສອບເສັງໃໝ່ໃນຊັ້ນປີທີ ສິບເອດສອງຄັ້ງ ແລະ ອີກສາມຄັ້ງໃນຊັ້ນຮຽນປີທີສິບສອງ. ສະເພາະແຕ່ພາກທີ່ຍັງບໍ່ທັນສອບຜ່ານເທົ່ານັ້ນທີ່ຕ້ອງໄດ້ສອບເສັງໃໝ່. ນອກນີ້, ໂຮງຮຽນໃນສູນກາງສຶກສາຕ່າງໆຍັງຖືກຮຽກຮ້ອງຕາມກົດໝາຍ ເພື່ອໃຫ້ມີການສິດສອນເພີ້ມແກ່ນັກຮຽນພວກທີ່ສອບເສັງຍັງບໍ່ທັນຜ່ານ ເພື່ອໃຫ້ເຂົາເຈົ້າໄດ້ຮຽນເຖິງເນື້ອໃນ ຂັ້ນມາຕຖານຂອງຣັຖ. ສູນກາງສຶກສາແຊນດິເອໂກ (SDCS) ໄດ້ໃຫ້ການຊ່ວຍເຫລືອບໍຣິການຕ່າງໆຜ່ານການສິດສອນໃນຫ້ອງຮຽນ ພ້ອມທັງມີຫ້ອງຮຽນຫລັງຈາກໂຮງຮຽນເລີກ ແລະ ຫ້ອງຮຽນໃນລະດູພັກຮ້ອນ.

## ການຮຽນໃນເຂດສຶກສາແຊນດິເອໂກ

- ໃນເດືອນພຶສພາ 2005: 83 ເປີເຊັນ ຂອງນັກຮຽນເຂດສຶກສາແຊນດິເອໂກ ໃນຫ້ອງຮຽນສົກປີ 2006 ແລະ 73 ເປີເຊັນຂອງນັກຮຽນເຂດສຶກສາແຊນດິເອໂກ ໃນຫ້ອງຮຽນສົກປີ 2007 ໄດ້ສອບຜ່ານການສອບເສັງອອກຊັ້ນມັທຍົມ (CAHSEE) ໃນພາກອັກສອນສາດ ພາສາອັງກິດ .
- ໃນເດືອນພຶສພາ 2005: 80 ເປີເຊັນຂອງນັກຮຽນໃນຫ້ອງຮຽນ ເຂດສຶກສາແຊນດິເອໂກ ສົກປີ 2006 ແລະ 69 ເປີເຊັນ ຂອງນັກຮຽນໃນຫ້ອງຮຽນສົກປີ 2007 ໄດ້ສອບຜ່ານການສອບເສັງອອກຊັ້ນມັທຍົມ (CAHSEE) ໃນພາກຄະນິດສາດ.

## ການສອບເສັງ CAHSEE ນີ້ແມ່ນຫຍັງ

ການສອບເສັງ CAHSEE ແບ່ງອອກເປັນສອງພາກ: ພາກອັກສອນສາດພາສາອັງກິດ ແລະ ຄະນິດສາດ. ຄໍາຖາມນີ້ໄດ້ເນັ້ນຄວາມສໍາຄັນຂອງເນື້ອໃນຂັ້ນມາຕຖານຂອງຣັຖທີ່ຈັດຂຶ້ນໂດຍຄະນະທໍາການສອບເສັງອອກຊັ້ນມັທຍົມ, ທີ່ມອບໜ້າທີ່ໂດຍຫົວໜ້າບໍຣິຫານການສຶກສາໂຮງຮຽນຫລວງຂອງຣັຖ, ໄດ້ຮູ້ສຶກວ່າພວກນັກຮຽນຕ້ອງໄດ້ສອບເສັງເພື່ອຈົບຊັ້ນມັທຍົມ. ພາກອັກສອນສາດ ພາສາອັງກິດໃນຂໍ້ສອບເສັງ CAHSEE ນີ້ ໄດ້ເນັ້ນໜັກເຖິງເນື້ອໃນຂັ້ນມາຕຖານຂອງຣັຖໂດຍຜ່ານແຕ່ຊັ້ນຮຽນປີທີ 10. ຊຶ່ງໄດ້ປະກອບດ້ວຍຂໍ້ຕອບທີ່ເລືອກຕອບເອົາ ແລະ ສອບເສັງການຂຽນພ້ອມ. ພາກອ່ານຢູ່ໃນຂໍ້ສອບເສັງນີ້ກວາມໄປເຖິງຄໍາສັບ, ການອ່ານຂ່າວ, ແລະ ການອ່ານອັກສອນສາດ. ພາກສ່ວນສອບເສັງຄະນິດສາດໄດ້ເນັ້ນໜັກເຖິງຂັ້ນມາຕຖານຂອງຣັຖຈາກຊັ້ນຮຽນປີທີ 6 ເຖິງ 8, ຮວມທັງປະມານເຄິ່ງປີໃນວິຊາພຶຊະຄະນິດ–ປີທີນຶ່ງ. ຊຶ່ງປະກອບດ້ວຍຄໍາຕອບທີ່ເລືອກຕອບເອົາ ທີ່ກວາມໄປເຖິງໂຕເລກ, ພຶຊະຄະນິດ ແລະ ເລກເສດສ່ວນ, ວິຊາວັດແທກ ແລະ ເຣຂາຄະນິດ, ແລະ ວິຊາສະຖິຕິ ແລະ ວິຊາຄາດຄະເນ.

ເພື່ອລາຍລະອຽດຕິດຕໍ່ຫາ: **Standards, Assessment, and Accountability: (619) 725-7166**
**Media inquires: (619) 725-5578**

www.sandi.net
*revised 09/21/2005*

"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລີຟເນັຍ, ມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕໍາແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈໍານວນພະນັກງານຫລາຍກວ່າ 15,800 ຄົນ.). ສູນກາງສຶກສາແຊນດິເອໂກໄດ້ປັບປຸງຄວາມສໍາເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ, ແລະ ວິຊາເລກແຕ່ຊັ້ນກຽມອະນຸບານເຖິງປີ 12. ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດໍາເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ."

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສໍາເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮໍ່າຮຽນຢູ່ໃນຫ້ອງຮຽນ.